| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPT-ITTD-20 | 30.12.2017 | ກົມເຕັກໂນໂລຊີຂໍ້ມູນຂ່າວສານ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | J - ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ຄຸ້ມຄອງ ເພື່ອໃຫ້ບໍລິການດັ່ງກ່າວ ມີປະສິດທິພາບ, ປອດໄພ ແລະ ຍຸຕິທຳ ຕໍ່ຜູ້ຊົມໃຊ້ ແລະ ສັງຄົມ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດທາງດ້ານຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຊຶ່ງການດຳເນີນທຸລະກິດທາງດ້ານຊອບແວ ແມ່ນຜູ້ທີ່ເຄື່ອນໄຫວທາງທຸລະກິດໃນການສ້າງ, ພັດທະນາ, ຕິດຕັ້ງ, ຈຳໜ່າຍ ແລະ ໃຫ້ເຊົ່າໃຊ້ຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການເຄື່ອນໄຫວທາງທຸລະກິດໃນການສ້າງ, ພັດທະນາ ແລະ ໃຫ້ບໍລິການຂໍ້ຄວາມ, ຮູບພາບ, ສຽງ, ວິດີໂອ ໃນຮູບແບບຂໍ້ມູນເອເລັກໂຕຣນິກ ທີ່ສະແດງຜົນຜ່ານອຸປະກອນເອເລັກໂຕຣນິກທີ່ມີການເຊື່ອມຕໍ່ກັບອິນເຕີເນັດ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.ITD.Gov.la |
| ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄຳເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ ແມ່ນຈະຖືກປັບໃໝ 10,000,000 ກີບ 2. ບໍ່ຕໍ່ໃບອະນຸຍາດ ພາຍໃນ 30 ວັນ ຫລັງຈາກໃບອະນຸຍາດໝົດອາຍຸແລ້ວ ຈະຖືກປັບໃໝ 1,000,000 ກີບ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 10 | ໃນກໍລະນີເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂໄດ້ຮັບອະນຸຍາດ, ຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດຮັບຊາບ ພາຍໃນກໍານົດເວລາ 5 ວັນລັດຖະການ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ມີວິຊາການທີ່ກ່ຽວຂ້ອງກັບປະເພດຂອງການບໍລິການ; 2. ມີສະຖານທີ່ຕັ້ງເໝາະສົມ; 3. ບໍ່ຢູ່ໃນຊ່ວງໄລຍະທີ່ຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປ ລາວ 4. ຕ້ອງໃຫ້ບໍລິການໄດ້ໂດຍສອດຄ່ອງກັບ ມາດຕະຖານເຕັກນິກ ແລະ ມາດຕະຖານຄວາມປອດໄພ ທີ່ລະບຸໄວ້ໃນຂໍ້ຕົກລົງເລກທີ 143/ປທສ ເຊັ່ນ ຕ້ອງຮອງຮັບຕົວອັກສອນພາສາລາວມ ມີປະສິດທິພາບໄດ້ມາດຕະຖານເຕັກນິກສາກົນ ISO/IEC 29110 | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກໍານົດ ທີ່ໄດ້ກໍານົດໄວ້ພາຍໃຕ້ກົດໝາຍ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 12 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ການຕໍ່ອາຍຸໃບອະນຸຍາດ ຕ້ອງປະກອບເອກະສານທີ່ລະບຸໄວ້ ກ່ອນວັນໝົດອາຍຸ ຢ່າງໜ້ອຍ 30 ວັນ ໂດຍອີງການຄຸ້ມຄອງ ຈະໃຊ້ເວລາພິຈາລະນາພາຍໃນ 5 ວັນລັດຖະການ |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 500000.00 | 50000.00 | 50000.00 | 600000.00 |
| ຄໍາເຫັນ | ອີງຕາມ ລັດຖະດໍາລັດ 003/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ |
|---|

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 500000.00 | 50000.00 | 50000.00 | 600000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ 003/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ | 02/ສພຊ | 11.07.2016 | ພາກທີ V ການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມາດຕາ 35 ເຖິງ ມາດຕາ 38 |
| ຂໍ້ຕົກລົງ ວ່າດ້ວຍການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ | 143/ປທສ | 20.01.2017 | ມາດຕາ 5 ຫາ ມາດຕາ 12 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |
| ໃບຢັ້ງຢືນວຸດທິການສຶກສາ |
| ໃບລາຍງານບັນຊີສຳຮອງ |
| ສຳເນົາບັດປະຈຳຕົວ/ສຳມະໂນຄົວຂອງອຳນວຍການ |
| ສຳເນົາພາດສະປອດຂອງອຳນວຍການ |
| ບົດວິພາກເສດຖະກິດເຕັກນິກ |
| ໃບຢັ້ງຢືນທີ່ຕັ້ງສຳນັກງານ |
| ໃບຊີວະປະຫວັດຂອງຜູ້ອຳນວຍການ |

| ເອກະສານປະກອບ |
|---|
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ໃບຢັ້ງຢືນທີ່ຢູ່ |
| ຮູບຖ່າຍຂອງອຳນວຍການ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 0 | 27 |